ขົດຂ່າວ

ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳໄຕມາດ 1 ປີ 2019

ໃນວັນທີ 24-25 ເມສາ 2019, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງ ປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳໄຕມາດ 1 ປີ 2019 ທີ່ຫ້ອງ ປະຊຸມໃຫຍ່ ຊັ້ນ 5 ຕຶກ C ສຳນັກງານໃຫຍ່ ທຄຕລ, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່, ໂດຍມີຄະນະອຳນວຍການ, ບັນດາທ່ານຄະນະພະແນກ, ສູນຈາກ ສຳນັກງານໃຫຍ່, ແລະ ຄະນະສາຂາໃນທົ່ວລະບົບ ພ້ອມດ້ວຍພະນັກງານກ່ຽວຂ້ອງເຂົ້າຮ່ວມທັງ ໝົດ 80 ທ່ານ.



ກອງປະຊຸມໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳໄຕມາດ 1 ປີ 2019 ໂດຍໄດ້ຍົກເອົາບັນຫາພື້ນເດັ່ນ ແລະ ບັນຫາຂໍ້ຄົງຄ້າງໃນການດຳເນີນງານແຕ່ລະດ້ານຂອງ ທຄຕລ ເພື່ອຄົ້ນຄວ້າ ແລະ ແລກປ່ຽນບົດຮຽນລະຫວ່າງສຳນັກງານໃຫຍ່-ບັນດາສາຂາ, ພ້ອມທັງປຶກສາຫາວິທີແກ້ໄຂບັນຫາ ຫຍຸ້ງຍາກຕ່າງໆ ເປັນຕົ້ນແມ່ນໃນວຽກງານ: ລະດົມເງິນຝາກ, ຄຸ້ມຄອງເງິນກູ້, ແກ້ໄຂໜີ້ເສຍ, ການບໍລິຫານແຫຼ່ງທຶນ-ເງິນສົດ, ການສ້າງລາຍຮັບ, ຄຸ້ມຄອງລາຍຈ່າຍ, ວຽກງານການຕະຫຼາດ-ຂາຍຜະລິດຕະພັນ, ວຽກງານບຸກຄະລາກອນ, ການຄຸ້ມຄອງຄວາມສ່ຽງ, ການຄຸ້ມຄອງລະບົບໄອທີ, ການຂະຫຍາຍຕາໜ່າງບໍລິການ. ບັນດາພະແນກການ-ສາຂາ ໄດ້ຮັບຮູ້ທິດທາງໃນການດຳເນີນງານຂອງ ທຄຕລ ໄລຍະໄຕມາດ 2/2019 ເພື່ອພ້ອມກັນນຳເອົາເນື້ອໃນຈິດໃຈກອງປະຊຸມໄປເຜີຍແຜ່ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.



ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມ, ໃຫ້ທິດຊີ້ນຳໃນການຄຸ້ມຄອງບໍລິຫານວຽກງານ ຈາກ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ເຊິ່ງ ທ່ານ ໄດ້ຕີລາຄາສູງຕໍ່ຜົນການດຳເນີນງານຂອງ ທຄຕລ ໄລຍະຜ່ານມາ, ຮຽກຮ້ອງໃຫ້ ທຄຕລ ສືບຕໍ່ໃນການພັດທະນາຜະລິດຕະພັນບໍລິການຕ່າງໆຄຽງຄູ່ກັບການຄຸ້ມຄອງຄວາມສ່ຽງ, ມີການປັບຕົວໃຫ້ທັນສະພາບການ ແລະ ເອົາໃຈໃສ່ສູ້ຊົນປະຕິບັດໃຫ້ບັນລຸແຜນການແຕ່ລະດ້ານຂອງ ທຄຕລ.